**Ascension Saint Thomas Behavioral Health Hospital**

**<u>ສັງລວມນະໂຍບາຍການຊ່ວຍເຫຼືອດ້ານການເງິນ</u>**

ປັບປຸງແລ້ວ 5/15/2021

Cumberland Behavioral Health, LLC dba Ascension Saint Thomas Behavioral Health Hospital ມີຄວາມມຸ້ງໝັ້ນ ແລະ ເຄົາລົບກຽດສັກສີຂອງແຕ່ລະຄົນໂດຍມີຄວາມກັງວົນເປັນພິເສດຕໍ່ຜູ້ທີ່ຕໍ່ສູ້ກັບອຸປະສັກໃນການ ເຂົ້າເຖິງການບໍລິການດ້ານສຸຂະພາບ. Ascension Saint Thomas Behavioral Health Hospital ມີຄວາມມຸ້ງໝັ້ນທີ່ເທົ່າທຽມກັນໃນການຄຸ້ມຄອງແຫຼ່ງຂໍ້ມູນດ້ານສຸຂະພາບເປັນການບໍລິການໃຫ້ແກ່ຊຸມຊົນທັງໝົດ. ເພື່ອສົ່ງເສີມຫຼັກການເຫຼົ່ານີ້, Ascension Saint Thomas Behavioral Health Hospital ໃຫ້ການຊ່ວຍເຫຼືອດ້ານ ການເງິນສໍາລັບບຸກຄົນທີ່ໄດ້ຮັບການດູແລສຸກເສີນ ຫຼື ທີ່ຈໍາ ເປັນທາງການແພດອື່ນໆ Ascension Saint Thomas Behavioral Health Hospital. ບົດສະຫຼຸບນີ້ໃຫ້ພາບລວມໂດຍຫຍໍ້ຂອງ ນະໂຍບາຍການຊ່ວຍເຫຼືອດ້ານການເງິນຂອງ Ascension Saint Thomas Behavioral Health Hospital.

## <u>ໃຜມີສິດໄດ້ຮັບ?</u>

ທ່ານອາດຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນຖ້າທ່ານອາໄສຢູ່ໃນເຂດປົກຄອງດັ່ງຕໍ່ໄປນີ້: Cannon, Davidson, Dekalb, Hickman, Rutherford, Warren, White, Montgomery, Putnam, Sumner, Williamson, Wilson. ໂດຍທົ່ວໄປແລ້ວການຊ່ວຍເຫຼືອທາງດ້ານການເງິນແມ່ນໄດ້ກໍານົດໂດຍລາຍຮັບຄົວເຮືອນທັງຫມົດຂອງທ່ານເມື່ອທຽບກັບລະດັບຄວາມທຸກຍາກຂອງລັດຖະບານກາງ. ຖ້າລາຍໄດ້ຂອງທ່ານຕໍ່າກ່ວາ ຫຼື ເທົ່າກັບ 250[10]% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບການດູແລຈາກການກຸສົນ 100% ໃນສ່ວນຂອງຄ່າບໍລິການທີ່ທ່ານຮັບຜິດຊອບ. ຖ້າລາຍໄດ້ຂອງທ່ານສູງກວ່າ 250[13]% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງແຕ່ບໍ່ເກີນ 400[11]% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບອັດຕາສ່ວນຫຼຸດທີ່ປັບຕາມລະດັບ. ຖ້າທ່ານມີໜີ້ສິນທາງການແພດສໍາລັບການດູແລສຸກເສີນ ແລະ ຄວາມຈໍາເປັນທາງການແພດທີ່ເກີນຈໍານວນລາຍໄດ້ຂອງທ່ານ, ທ່ານອາດຈະມີສິດໄດ້ຮັບສ່ວນຫຼຸດ. ຖ້າທ່ານມີຊັບສິນເກີນ 250% ຂອງຈໍານວນລາຍໄດ້ຈາກລະດັບຄວາມທຸກຍາກຂອງ ລັດຖະບານກາງຂອງທ່ານ ທ່ານອາດຈະບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນ. [ທ່ານອາດຈະຕ້ອງຈ່າຍຄ່າທໍານຽມພຽງເລັກ ນ້ອຍສໍາລັບການບໍລິການ.][12] ຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນຈະບໍ່ໄດ້ຮັບການຄິດຄ່າທໍານຽມເພີ່ມເຕີມສໍາລັບ ການດູແລທີ່ມີເງື່ອນໄຂຫຼາຍກວ່າຈໍານວນທີ່ທົ່ວໄປຈ່າຍໃຫ້ຄົນເຈັບທີ່ມີປະກັນໄພ.

## <u>ການບໍລິການໃດແດ່ໄດ້ຮັບການຄຸ້ມຄອງ?</u>

ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ນໍາໃຊ້ກັບການເບິ່ງແຍງດູແລສຸກເສີນ ແລະ ການເບິ່ງແຍງດູແລທີ່ຈໍາເປັນ ທາງການແພດອື່ນໆ. ຂໍ້ກໍານົດເຫຼົ່ານີ້ແມ່ນໄດ້ກໍານົດໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ. ການດູແລອື່ນໆ ທັງໝົດບໍ່ໄດ້ຖືກຄຸ້ມຄອງໂດຍນະໂຍບາຍການຊ່ວຍເຫຼືອດ້ານການເງິນ.

## <u>ຂ້າພະເຈົ້າສາມາດສະໝັກຂໍໄດ້ແນວໃດ?</u>

ເພື່ອສະຫມັກຂໍການຊ່ວຍເຫຼືອທາງດ້ານການເງິນ, ປົກກະຕິທ່ານ ຈະຕ້ອງຂຽນໃບຄໍາຮ້ອງສະຫມັກຂໍເປັນລາຍລັກອັກສອນ ແລະ ປະກອບເອກະສານສະໜັບສະໜູນໃຫ້ຕາມທີ່ລະບຸໄວ້ໃນນະໂຍບາຍການ ຊ່ວຍເຫຼືອທາງດ້ານການເງິນ ແລະ ການໃຊ້ນະໂຍບາຍການ ຊ່ວຍເຫຼືອທາງດ້ານການເງິນ.[13]

## <u>ຂ້າພະເຈົ້າສາມາດຮັບການຊ່ວຍເຫຼືອກັບການສະໝັກຂໍໄດ້ແນວໃດ?</u>

ສໍາລັບການຊ່ວຍເຫຼືອໃນການປະຕິບັດນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ທ່ານສາມາດຕິດຕໍ່ໄດ້Kami Morgan ທີ່ 300 Great Circle Road, Nashville TN 37228 ຫຼື ໂທຫາລາວໂດຍກົງທີ່ 629-216-2163.

## <u>ຂ້າພະເຈົ້າສາມາດຂໍຂໍ້ມູນເພີ່ມເຕີມໄດ້ແນວໃດ?</u>

ສໍາເນົາຂອງເອກະສານ ນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ແບບຟອມນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແມ່ນມີຢູ່ທີ່ www.saintthomasbehavioral.com ແລະ ທີ່ 300 Great Circle Road, Nashville TN 37228. ສໍາເນົາຂອງ ນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການເງິນ ຍັງສາມາດໄດ້ຮັບທາງໄປສະນີ ໂດຍການຕິດຕໍ່ Kami Morgan ທີ່ຂໍ້ມູນລະບຸໄວ້ຂ້າງເທິງ. ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນ ຍັງມີໃຫ້ອ່ານໄດ້ທີ່ www.saintthomasbehavioral.com ແລະ ທີ່ 300 Great Circle Road, Nashville TN 37228, ຫຼື ໂທລະສັບໄປທີ່ 629-216-2163.

## <u>ຈະເປັນແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມີສິດໄດ້ຮັບ?</u>

ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອປະເພດອື່ນ. ສໍາລັບຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ Kami Morgan ທີ່ 300 Great Circle Road, Nashville TN 37228 ຫຼື ໂທຫາລາວໂດຍກົງທີ່ 629-216-2163.

**ການແປຄໍາອະທິບາຍກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ບົດແນະນໍາ ແລະ ບົດສະຫຼຸບພາສາທໍາມະດານີ້ແມ່ນມີໃຫ້ເປັນພາສາຕໍ່ໄປນີ້ໃນເວັບໄຊທ໌ຂອງພວກເຮົາ ແລະ ຕາມການຮ້ອງຂໍ:**

ອາລາບິກ
ລາວ
ເກົາຫຼີ
ພາສາຈີນແບບງ່າຍ
ສະແປນ
ພາສາຈີນພື້ນເມືອງ
ຫວຽດນາມ